ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 817 /ລບ

ນະຄອນຫຼວງວຽງຈັນ, ວັນທີ 17 / 12 / 25

# ດຳລັດ
# ວ່າດ້ວຍການປະເມີນຜົນກະທົບຕໍ່ສຸຂະພາບ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 73/ສພຊ, ລົງວັນທີ 22 ພະຈິກ 2019;
- ອີງຕາມ ໜັງສືສະເໜີຂອງກະຊວງສາທາລະນະສຸກ ສະບັບເລກທີ 1110/ສທ, ລົງວັນທີ 14 ພະຈິກ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ດຳເນີນໄປຢ່າງ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ກັນ, ຄວບຄຸມ, ໂຕ້ຕອບ ແລະ ຢຸດການສົ່ງຜົນກະທົບຕໍ່ສຸຂະພາບ ຂອງ ຜູ້ອອກແຮງງານ ແລະ ຊຸມຊົນ ທີ່ຢູ່ໂຄງການ, ເຂດອ້ອມຂ້າງໂຄງການ ຫຼື ສະຖານທີ່ອື່ນ ທີ່ອາດເກີດຈາກ ໂຄງການລົງທຶນ ຫຼື ກິດຈະການ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການປະເມີນຜົນກະທົບຕໍ່ສຸຂະພາບ**

ການປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ຂະບວນການສຶກສາ, ສຳຫຼວດ, ວິໄຈຂໍ້ມູນ, ນຳໃຊ້ ເຄື່ອງມື ເພື່ອວັດແທກ ແລະ ຄາດຄະເນ ຜົນກະທົບທີ່ອາດເປັນອັນຕະລາຍຕໍ່ສຸຂະພາບ ທັງທາງກົງ ແລະ ທາງອ້ອມ ທີ່ ອາດເກີດຈາກໂຄງການລົງທຶນ ຫຼື ກິດຈະການ ພ້ອມທັງວາງແຜນຄຸ້ມຄອງ ໃນແຕ່ລະໄລຍະ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ປັດໄຈກຳນົດສຸຂະພາບ** ໝາຍເຖິງ ຂອບເຂດປັດໄຈດ້ານ ບຸກຄົນ, ສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ທີ່ມີຄວາມສ່ຽງຕໍ່ສຸຂະພາບ ທັງທາງກົງ ແລະ ທາງອ້ອມ ຊຶ່ງເປັນຕົວກຳນົດສະຖານະ ທາງສຸຂະພາບຂອງ ບຸກຄົນ ຫຼື ຊຸມຊົນ;

2. **ສິ່ງທີ່ເປັນອັນຕະລາຍຕໍ່ສຸຂະພາບ** ໝາຍເຖິງ ສິ່ງໃດໜຶ່ງທີ່ຈະກໍ່ໃຫ້ເກີດອັນຕະລາຍໃນລະບົບເຮັດວຽກ ແລະ ສະພາບແວດລ້ອມທີ່ມີຄວາມສ່ຽງ ໃນການເຮັດວຽກງານ ເປັນຕົ້ນ ເຊື້ອພະຍາດ, ສານເຄມີ, ລັງສີ;

3. **ປັດໄຈຮີບດ່ວນ** ໝາຍເຖິງ ປັດໄຈກໍານົດສຸຂະພາບທີ່ມີຄວາມຈໍາເປັນຕ້ອງໄດ້ນໍາມາວິເຄາະຄວາມສ່ຽງ ຊຶ່ງອາດສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ຊຸມຊົນ ທີ່ຢູ່ໃນໂຄງການ, ເຂດອ້ອມຂ້າງໂຄງການ ຫຼື ສະຖານທີ່ອື່ນ ໃນເວລາເລີ່ມຕົ້ນໂຄງການ ຫຼື ກິດຈະການຕ່າງໆ ທີ່ຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ;

4. **ຜູ້ຊ່ຽວຊານສະເພາະດ້ານ** ໝາຍເຖິງ ບຸກຄົນທີ່ມີຄຸນວຸດທິສະເພາະດ້ານ ທີ່ພົວພັນກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ຊຶ່ງໄດ້ຮັບການອະນຸຍາດ ໃຫ້ເຄື່ອນໄຫວກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ ຈາກກະຊວງສາທາລະນະສຸກ;

5. **ຜູ້ດໍາເນີນການປະເມີນຜົນກະທົບຕໍ່ສຸຂະພາບ** ໝາຍເຖິງ ຜູ້ດໍາເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ທີ່ເຈົ້າຂອງໂຄງການ ຫຼື ກິດຈະການ ວ່າຈ້າງໃຫ້ດໍາເນີນການປະເມີນຜົນກະທົບຕໍ່ສຸຂະພາບ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້ ຫຼື ຂະແໜງການສາທາລະນະສຸກ ຕາມທີ່ໄດ້ ກໍານົດໄວ້ໃນລະບຽບການຕ່າງຫາກ;

6. **ຜູ້ມີສ່ວນຮ່ວມ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຄວາມສົນໃຈ, ພົວພັນ, ມີສ່ວນກ່ຽວຂ້ອງ ຫຼື ມີຜົນໄດ້ຜົນເສຍ ໃນໂຄງການລົງທຶນ ຫຼື ກິດຈະການຕ່າງໆ.

**ມາດຕາ 4 ຫຼັກການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ**

ວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຄຸ້ມຄອງ ລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ຍຸຕິທໍາ ແລະ ສາມາດກວດສອບໄດ້;
4. ຮັບປະກັນການມີສ່ວນຮ່ວມຂອງສັງຄົມ;
5. ຮັບປະກັນຂໍ້ມູນໃຫ້ມີຄວາມເຊື່ອຖືໄດ້, ຊັດເຈນ, ມີລັກສະນະວິທະຍາສາດ, ສາມາດກວດສອບ ແລະ ຢັ້ງຢືນຄືນໄດ້ ບົນພື້ນຖານດ້ານຈັນຍາທໍາ;
6. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 5 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນໂຄງການລົງທຶນ ຫຼື ກິດຈະການ ຢູ່ ສປປ ລາວ.

## ໝວດທີ 2
## ການກັ່ນຕອງໂຄງການລົງທຶນ ຫຼື ກິດຈະການ

**ມາດຕາ 6 ການກັ່ນຕອງໂຄງການລົງທຶນ ຫຼື ກິດຈະການ**

ການກັ່ນຕອງໂຄງການລົງທຶນ ຫຼື ກິດຈະການ ແມ່ນ ຂະບວນການພິຈາລະນາວ່າ ໂຄງການ ຫຼື ກິດຈະການນັ້ນ ມີຄວາມ ຈໍາເປັນ ຫຼື ບໍ່ຈໍາເປັນ ດໍາເນີນການປະເມີນຜົນກະທົບຕໍ່ສຸຂະພາບ ຕາມຄວາມຮຸນແຮງ, ຂະໜາດ ຂອງຜົນກະທົບ ແລະ ຈໍານວນຜູ້ທີ່ໄດ້ຮັບຜົນກະທົບ.

**ມາດຕາ 7 ຂັ້ນຕອນການກັ່ນຕອງໂຄງການລົງທຶນ ຫຼື ກິດຈະການ**

ການກັ່ນຕອງໂຄງການລົງທຶນ ຫຼື ກິດຈະການ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການສະໜອງຂໍ້ມູນເບື້ອງຕົ້ນ ກ່ຽວກັບໂຄງການ ຫຼື ກິດຈະການ;
2. ການດໍາເນີນການກັ່ນຕອງໂຄງການ ຫຼື ກິດຈະການ;

3. ການແຈ້ງຜົນຂອງການກັ່ນຕອງ.

**ມາດຕາ 8 ການສະເໜີຂໍ້ມູນເບື້ອງຕົ້ນກ່ຽວກັບໂຄງການ ຫຼື ກິດຈະການ**

ເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການ ທີ່ຢູ່ໃນບັນຊີ ຫຼື ມີຄວາມຈຳເປັນ ທີ່ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ຕ້ອງສະເໜີຂໍ້ມູນເບື້ອງຕົ້ນ ກ່ຽວກັບໂຄງການ ຫຼື ກິດຈະການຂອງຕົນ ໂດຍມີການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ສະຖານທີ່ຕັ້ງ, ການດຳເນີນໂຄງການ ຫຼື ກິດຈະການ, ລະດັບ ແລະ ຂະໜາດຂອງຜົນກະທົບ, ຈຳນວນປະຊາກອນທີ່ຈະໄດ້ຮັບຜົນກະທົບ, ຜູ້ມີສ່ວນໄດ້ສ່ວນເສຍ, ຜູ້ດ້ອຍໂອກາດ ຫຼື ກຸ່ມສ່ຽງອື່ນ ຕາມທີ່ກຳນົດໄວ້ໃນແບບພິມ ແລ້ວສົ່ງໃຫ້ກະຊວງສາທາລະນະສຸກ ເພື່ອດຳເນີນການກັ່ນຕອງ.

**ມາດຕາ 9 ການດຳເນີນການກັ່ນຕອງໂຄງການ ຫຼື ກິດຈະການ**

ກະຊວງສາທາລະນະສຸກ ດຳເນີນການກັ່ນຕອງໂຄງການ ຫຼື ກິດຈະການ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຂໍ້ມູນຄົບຖ້ວນ ຈາກເຈົ້າຂອງໂຄງການ ຫຼື ກິດຈະການ ເປັນຕົ້ນໄປ.

**ມາດຕາ 10 ການແຈ້ງຜົນຂອງການກັ່ນຕອງ**

ກະຊວງສາທາລະນະສຸກ ຕ້ອງແຈ້ງຜົນຂອງການກັ່ນຕອງ ໃຫ້ ເຈົ້າຂອງໂຄງການ ຫຼື ກິດຈະການ ພາຍໃນເວລາ ຫ້າວັນລັດຖະການ ວ່າ ໂຄງການ ຫຼື ກິດຈະການດັ່ງກ່າວ ຕ້ອງດຳເນີນ ຫຼື ບໍ່ຈຳເປັນດຳເນີນ ການປະເມີນຜົນກະທົບຕໍ່ສຸຂະພາບ.

ໃນກໍລະນີ ທີ່ບໍ່ຈຳເປັນຕ້ອງດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ກະຊວງສາທາລະນະສຸກ ຕ້ອງແນະນຳກ່ຽວກັບການປ້ອງກັນຜົນກະທົບຕໍ່ສຸຂະພາບ ຫຼື ຫຼຸດຜ່ອນຜົນກະທົບ ໃຫ້ໜ້ອຍລົງ.

## ໝວດທີ 3
## ຂັ້ນຕອນການປະເມີນຜົນກະທົບຕໍ່ສຸຂະພາບ

**ມາດຕາ 11 ຂັ້ນຕອນການປະເມີນຜົນກະທົບຕໍ່ສຸຂະພາບ**

ຂັ້ນຕອນການປະເມີນຜົນກະທົບຕໍ່ສຸຂະພາບ ມີ ດັ່ງນີ້:

1. ການກຳນົດຂອບເຂດການສຶກສາ ແລະ ໜ້າວຽກ;
2. ການດຳເນີນການປະເມີນ;
3. ການສຶກສາທາງເລືອກ;
4. ການສ້າງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ;
5. ການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ.

**ມາດຕາ 12 ການກຳນົດຂອບເຂດການສຶກສາ ແລະ ໜ້າວຽກ**

ການກຳນົດຂອບເຂດການສຶກສາ ແມ່ນ ການກຳນົດຂອບເຂດ ຂອງບັນຫາທີ່ຈະສຶກສາ, ພື້ນທີ່, ກຸ່ມປະຊາກອນ, ໄລຍະເວລາ ໃນການເກັບກຳຂໍ້ມູນ ແລະ ຜົນກະທົບຕໍ່ສຸຂະພາບດ້ານຕ່າງໆ ທີ່ອາດຈະເກີດຂຶ້ນ.

ການກຳນົດໜ້າວຽກ ແມ່ນ ການອອກແບບ ແລະ ສ້າງແຜນການ ຕາມວິທີການປະເມີນຜົນກະທົບຕໍ່ສຸຂະພາບ ເປັນຕົ້ນ ການປະເມີນແບບປະລິມານ, ການປະເມີນແບບຄຸນນະພາບ, ການປະເມີນແບບປະສົມປະສານ.

ເຈົ້າຂອງໂຄງການ ຫຼື ກິດຈະການ ຕ້ອງສ້າງ ບົດລາຍງານຂອບເຂດການສຶກສາ ແລະ ໜ້າວຽກ ໃນການປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ກະຊວງສາທາລະນະສຸກ ພິຈາລະນາ.

ໃນກໍລະນີ ການກຳນົດຂອບເຂດການສຶກສາ ແລະ ໜ້າວຽກ ມີເນື້ອໃນບໍ່ຄົບຖ້ວນ ກະຊວງສາທາລະນະສຸກ ຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ຫຼື ກິດຈະການ ນຳໄປປັບປຸງເພີ່ມຕື່ມ.

### ມາດຕາ 13 ການດຳເນີນການປະເມີນ

ການດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ການວິເຄາະທັງ ດ້ານບວກ ແລະ ດ້ານລົບ ຕາມການກຳນົດຂອບເຂດການສຶກສາ ແລະ ໜ້າວຽກ ເພື່ອໃຫ້ເຫັນ ລະດັບຄວາມສ່ຽງທີ່ຈະເກີດຂຶ້ນ, ວິທີການ ປັບປຸງແກ້ໄຂ ໃນການຈັດຕັ້ງປະຕິບັດໂຄງການ ຫຼື ກິດຈະການ ທີ່ອາດມີຜົນກະທົບຕໍ່ສຸຂະພາບ.

ໃນການປະເມີນຜົນກະທົບຕໍ່ສຸຂະພາບ ມີຂະບວນການ ດັ່ງນີ້:

1. ສັງລວມ ແລະ ວິເຄາະ ຂໍ້ມູນ ຈາກໜ່ວຍງານທີ່ກ່ຽວຂ້ອງ ເປັນຕົ້ນ ຂໍ້ມູນກ່ຽວກັບປະຊາກອນ, ສິ່ງແວດລ້ອມ ແລະ ສາທາລະນະສຸກ;
2. ສຳພາດ ຜູ້ມີສ່ວນໄດ້ສ່ວນເສຍ ໂດຍການມີສ່ວນຮ່ວມ;
3. ສັງເກດ ແລະ ເກັບກຳຂໍ້ມູນ ພື້ນທີ່ ທາງດ້ານກາຍຍະພາບ, ຊີວະພາບ, ສັງຄົມ ແລະ ສິ່ງແວດລ້ອມ;
4. ສ້າງແຜນ ໂດຍອີງໃສ່ຂໍ້ມູນທາງດ້ານພູມສາດ;
5. ທົບທວນຂໍ້ມູນ ຫຼັກຖານ ທາງດ້ານວິທະຍາສາດ ທີ່ກ່ຽວຂ້ອງ.

### ມາດຕາ 14 ການສຶກສາທາງເລືອກ

ການສຶກສາທາງເລືອກ ແມ່ນ ການຊອກຫາທິດທາງ ໃນການພັດທະນາໂຄງການລົງທຶນ ຫຼື ການດຳເນີນກິດຈະການ ຢ່າງຍືນຍົງ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດສູງສຸດ.

ເຈົ້າຂອງໂຄງການ ຫຼື ກິດຈະການ ຕ້ອງສຶກສາທາງເລືອກ ຢ່າງໜ້ອຍ ສາມທາງເລືອກ ຊຶ່ງແຕ່ລະທາງເລືອກ ຕ້ອງສະແດງໃຫ້ເຫັນເນື້ອໃນສຳຄັນ ເປັນຕົ້ນ ທີ່ຕັ້ງຂອງໂຄງການ, ຂະໜາດຂອງໂຄງການ ແລະ ຂະບວນການຜະລິດ ລວມທັງການອະທິບາຍຜົນກະທົບຕໍ່ສຸຂະພາບ ພ້ອມທັງປຽບທຽບລະຫວ່າງ ບັນດາທາງເລືອກນັ້ນ ແລະ ອະທິບາຍເຫດຜົນໃນການເລືອກທາງເລືອກໃດໜຶ່ງ ຊຶ່ງໜຶ່ງໃນຈຳນວນທາງເລືອກນັ້ນ ຕ້ອງມີທາງເລືອກທີ່ບໍ່ມີການພັດທະນາໂຄງການ ຫຼື ດຳເນີນກິດຈະການ ໂດຍມີການອະທິບາຍສະພາບສິ່ງແວດລ້ອມ, ດ້ານບວກ ແລະ ດ້ານລົບ ຂອງທາງເລືອກດັ່ງກ່າວ ເພື່ອນຳເອົາໄປປຽບທຽບກັບທາງເລືອກອື່ນ.

### ມາດຕາ 15 ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ

ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ການລາຍງານຜົນການສຶກສາ ກ່ຽວກັບຜົນກະທົບຕໍ່ສຸຂະພາບ ທີ່ອາດຈະເກີດຈາກການ ພັດທະນາໂຄງການລົງທຶນ ຫຼື ດຳເນີນກິດຈະການ.

ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ມີເນື້ອໃນ ດັ່ງນີ້:

1. ຈຸດປະສົງຂອງໂຄງການ;
2. ທາງເລືອກຂອງໂຄງການ;
3. ສະພາບຂອງພື້ນທີ່ ທີ່ໂຄງການຕັ້ງຢູ່;
4. ປັດໄຈກຳນົດສຸຂະພາບ;
5. ບັນດາປັດໄຈຮີບດ່ວນ;
6. ສິ່ງທີ່ເປັນອັນຕະລາຍຕໍ່ສຸຂະພາບ;
7. ການວິເຄາະກ່ຽວກັບຊຸມຊົນ ແລະ ປະຊາກອນ;
8. ການປະເມີນຜົນກະທົບແບບສະສົມ;
9. ປະເມີນຄວາມສ່ຽງດ້ານສຸຂະພາບ;
10. ການທົບທວນເອກະສານ;
11. ກຳນົດວິທີການ ແລະ ມາດຕະການທີ່ເໝາະສົມ ເພື່ອປ້ອງກັນ, ຫຼີກລ້ຽງ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສຸຂະພາບທີ່ຄາດວ່າຈະເກີດຂຶ້ນ.

**ມາດຕາ 16 ການສ້າງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ**

ໃນການສ້າງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຜູ້ດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງປະຕິບັດ ດັ່ງນີ້:

1. ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ເປັນພາສາລາວ ໂດຍສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ;
2. ດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ໄປຄຽງຄູ່ກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ປະສານສົມທົບກັບຂະແໜງການສາທາລະນະສຸກ ຂັ້ນທ້ອງຖິ່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຂໍອະນຸມັດລົງເກັບກຳຂໍ້ມູນ ແລະ ດຳເນີນຂະບວນການການມີສ່ວນຮ່ວມຂອງສັງຄົມ ກ່ຽວກັບການພັດທະນາໂຄງການ;
4. ເກັບກຳຂໍ້ມູນລະອຽດກ່ຽວກັບປັດໄຈກຳນົດສຸຂະພາບ, ປັດໄຈຮີບດ່ວນ ແລະ ສິ່ງທີ່ເປັນອັນຕະລາຍຕໍ່ສຸຂະພາບ ຢູ່ພາກສະໜາມ;
5. ລະບຸ ແລະ ໃຈ້ແຍກ ລັກສະນະຂອງຜົນກະທົບຕໍ່ສຸຂະພາບທີ່ອາດຈະເກີດຂຶ້ນ;
6. ສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ເປັນສະບັບໜຶ່ງຕ່າງຫາກ;
7. ດຳເນີນການປະເມີນຜົນກະທົບແບບສະສົມ, ການປະເມີນຜົນກະທົບຂ້າມຊາຍແດນ, ການປະເມີນຄວາມສ່ຽງດ້ານສຸຂະພາບ.

**ມາດຕາ 17 ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ**

ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ແມ່ນ ການກຳນົດ ມາດຕະການ, ທິດທາງໃນການຫຼຸດຜ່ອນຜົນກະທົບຕໍ່ສຸຂະພາບ ຂອງຜູ້ອອກແຮງງານ ແລະ ຊຸມຊົນ ທີ່ຢູ່ໃນໂຄງການ, ເຂດອ້ອມຂ້າງໂຄງການ ທີ່ອາດຈະເກີດຈາກ ໂຄງການ ຫຼື ກິດຈະການ ທັງໃນໄລຍະກໍ່ສ້າງ, ໄລຍະດຳເນີນການ ແລະ ໄລຍະສິ້ນສຸດໂຄງການ ຫຼື ກິດຈະການ.

ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຈຸດປະສົງສະເພາະ;
2. ຕົວຊີ້ວັດ;
3. ໄລຍະເວລາ;
4. ສະຖານທີ່;
5. ມາດຕະການ ຫຼຸດຜ່ອນຜົນກະທົບຕໍ່ສຸຂະພາບ;
6. ທິດທາງການປະຕິບັດ;
7. ການຊຸກຍູ້ວຽກງານສາທາລະນະສຸກ;
8. ງົບປະມານທີ່ຮັບໃຊ້ການຈັດຕັ້ງປະຕິບັດຕາມແຜນ.

**ມາດຕາ 18 ການສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ**

ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຕ້ອງປະກອບມີເນື້ອໃນຕົ້ນຕໍກ່ຽວກັບໜ້າວຽກ, ກິດຈະກຳຂອງໂຄງການ, ຜົນກະທົບທີ່ອາດຈະເກີດຂຶ້ນ, ຄວາມສ່ຽງດ້ານສຸຂະພາບ, ມາດຕະການ ປ້ອງກັນ, ຫຼຸດຜ່ອນ, ແກ້ໄຂ ຜົນກະທົບຕໍ່ສຸຂະພາບ, ອຸບປະຕິເຫດ ຫຼື ເຫດການສຸກເສີນ ທີ່ອາດຈະເກີດຂຶ້ນ, ກຳນົດເວລາ, ງົບປະມານ ແລະ ຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດ, ແຜນການຕິດຕາມ ກວດກາ ຂອງເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຂະແໜງການທີ່ກ່ຽວຂ້ອງ ຂອງລັດ.

ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຕ້ອງສ້າງໄປຄຽງຄູ່ກັບການສ້າງ ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ດຳເນີນການປັບປຸງແຜນດັ່ງກ່າວໃຫ້ສອດຄ່ອງກັບສະພາບ ຂອງການພັດທະນາໂຄງການລົງທຶນ ຫຼື ການດຳເນີນກິດຈະການ ໃນແຕ່ລະໄລຍະ.

**ມາດຕາ 19 ການປະກອບເອກະສານຂໍຮັບຮອງ ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ**

ຜູ້ດໍາເນີນການປະເມີນຜົນກະທົບຕໍ່ສຸຂະພາບ ທີ່ມີຈຸດປະສົງຂໍຮັບຮອງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍຮັບຮອງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຕາມແບບພິມທີ່ກະຊວງສາທາລະນະສຸກ ກໍານົດ;
2. ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ;
3. ບົດບັນທຶກກອງປະຊຸມປຶກສາຫາລື ແຕ່ລະຄັ້ງ;
4. ບົດວິພາກເສດຖະກິດ-ເຕັກນິກ;
5. ສໍາເນົາໃບອະນຸຍາດດໍາເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ແລະ ລາຍຊື່ ພ້ອມທັງຊີວະປະຫວັດຫຍໍ້ ຂອງຄະນະທີມງານ ທີ່ດໍາເນີນການປະເມີນຜົນກະທົບຕໍ່ສຸຂະພາບ.

**ມາດຕາ 20 ການກວດກາເອກະສານປະກອບ**

ກະຊວງສາທາລະນະສຸກ ຕ້ອງກວດກາຄໍາຮ້ອງຂໍຮັບຮອງບົດລາຍງານ ການປະເມີນຜົນກະທົບຕໍ່ສຸຂະພາບ ພ້ອມດ້ວຍເອກະສານປະກອບ ແລ້ວແຈ້ງໃຫ້ຜູ້ດໍາເນີນການປະເມີນຜົນກະທົບຕໍ່ສຸຂະພາບ ເປັນລາຍລັກອັກສອນ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບການຂໍຮັບຮອງບົດລາຍງານດັ່ງກ່າວ ເປັນຕົ້ນໄປ ຖ້າເຫັນວ່າເອກະສານຖືກຕ້ອງຄົບຖ້ວນ, ຜູ້ດໍາເນີນການປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງປະກອບໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ ສົ່ງໃຫ້ກະຊວງສາທາລະນະສຸກ.

ໃນກໍລະນີເອກະສານ ມີເນື້ອໃນບໍ່ ຖືກຕ້ອງ, ຄົບຖ້ວນ ແລະ ຂໍ້ມູນບໍ່ມີຄວາມເຊື່ອຖືໄດ້, ກະຊວງສາທາລະນະສຸກ ຕ້ອງປະຕິເສດການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຈ້ງຈຸດບົກພ່ອງຂອງເອກະສານດັ່ງກ່າວ ພ້ອມທັງແນະນໍາວິທີ ແລະ ຂັ້ນຕອນໃນການດໍາເນີນການຕໍ່ໄປ.

**ມາດຕາ 21 ການທົບທວນ ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ**

ກະຊວງສາທາລະນະສຸກ ເປັນຜູ້ດໍາເນີນການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ເອກະສານທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຈາກເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການຕ່າງໆ ເປັນຕົ້ນໄປ, ຖ້າການທົບທວນຫາກມີຄວາມຈໍາເປັນ ທີ່ຕ້ອງໃຊ້ເວລາເກີນກໍານົດດັ່ງກ່າວ ກໍຕ້ອງແຈ້ງເປັນລາຍລັກອັກສອນ ກ່ຽວກັບເຫດຜົນ ໃຫ້ເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການ ນັ້ນ ຊາບ.

ໃນກໍລະນີ ການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ພົວພັນກັບຫຼາຍພາກສ່ວນ, ມີຄວາມສະຫຼັບຊັບຊ້ອນ ກະຊວງສາທາລະນະສຸກ ສາມາດແຕ່ງຕັ້ງຄະນະທົບທວນ.

ການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ປະກອບມີ ສອງ ໄລຍະ ຄື ການເກັບກໍາຄໍາເຫັນ ແລະ ການທົບທວນຂັ້ນສຸດທ້າຍ.

**ມາດຕາ 22 ການເກັບກໍາຄໍາເຫັນ**

ກະຊວງສາທາລະນະສຸກ ເປັນຜູ້ດໍາເນີນການເກັບກໍາຄໍາເຫັນ ພາຍໃນກໍານົດ ສາມສິບຫ້າວັນ ນັບແຕ່ວັນໄດ້ຮັບບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ເອກະສານປະກອບທີ່ກ່ຽວຂ້ອງ ຈາກເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການ ເປັນຕົ້ນໄປ ດັ່ງນີ້:

1. ສົ່ງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ພ້ອມດ້ວຍແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ໃຫ້ພະແນກສາທາລະນະສຸກ ຂັ້ນແຂວງ, ຫ້ອງການສາທາລະນະສຸກ ຂັ້ນເມືອງ ແລະ

ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອປະກອບຄຳເຫັນ ພາຍໃນກຳນົດ ສິບວັນ ລັດຖະການ ພ້ອມທັງເອົາລົງເວັບໄຊ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ປະກອບຄຳເຫັນ ພາຍໃນກຳນົດ ຊາວຫ້າວັນ;

2. ປະສານສົມທົບກັບເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການ, ພະແນກສາທາລະນະສຸກ ຂັ້ນແຂວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ລົງກວດກາຕົວຈິງພາກສະໜາມ ແລະ ຈັດກອງປະຊຸມວິຊາການປຶກສາຫາລືແບບມີສ່ວນຮ່ວມ ຂັ້ນທ້ອງຖິ່ນ ໂດຍການເຂົ້າຮ່ວມຂອງພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເພື່ອປະກອບຄຳເຫັນໃສ່ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ;

3. ສັງລວມຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງ, ຜົນກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມ ຂັ້ນທ້ອງຖິ່ນ, ຄຳເຫັນທີ່ໄດ້ຮັບ ໃນເວັບໄຊ ແລ້ວສົ່ງໃຫ້ເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການຕ່າງໆ ພາຍໃນເວລາ ສິບວັນ ລັດຖະການ ເພື່ອປັບປຸງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ແລ້ວສົ່ງຄືນໃຫ້ກະຊວງສາທາລະນະສຸກ.

### ມາດຕາ 23 ການທົບທວນຂັ້ນສຸດທ້າຍ

ກະຊວງສາທາລະນະສຸກ ເປັນຜູ້ທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂັ້ນສຸດທ້າຍ ພາຍໃນເວລາ ຫົກສິບວັນ ນັບແຕ່ວັນໄດ້ຮັບບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ສະບັບປັບປຸງ ຈາກເຈົ້າຂອງໂຄງການລົງທຶນ ຫຼື ກິດຈະການ ເປັນຕົ້ນໄປ.

### ມາດຕາ 24 ການທົບທວນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ

ການທົບທວນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ມີ ສອງ ໄລຍະ ດັ່ງນີ້:

1. ໄລຍະທີໜຶ່ງ ທົບທວນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ໄປຄຽງຄູ່ກັບການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຕາມທີ່ກຳນົດໄວ້ໃນມາດຕາ 21, 22 ແລະ 23 ຂອງດຳລັດສະບັບນີ້;

2. ໄລຍະທີສອງ ທົບທວນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ສະບັບປັບປຸງ ຫຼື ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ໃນໄລຍະກໍ່ສ້າງ ຫຼື ໄລຍະດຳເນີນງານ ຫຼື ໄລຍະສິ້ນສຸດໂຄງການ. ການທົບທວນດັ່ງກ່າວ ໃຫ້ສຳເລັດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີໄດ້ຮັບແຜນການດັ່ງກ່າວ ຈາກເຈົ້າຂອງໂຄງການ ຫຼື ກິດຈະການ ເປັນຕົ້ນໄປ ໂດຍກະຊວງສາທາລະນະສຸກ ປະສານສົມທົບກັບ ເຈົ້າຂອງໂຄງການ ຫຼື ກິດຈະການ ຈັດກອງປະຊຸມປຶກສາຫາລື ແລະ ລົງກວດກາພາກສະໜາມ ຕາມຄວາມຈຳເປັນ.

ໃນການທົບທວນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ໄລຍະທີສອງ ເຈົ້າຂອງໂຄງການ ຫຼື ກິດຈະການ ຕ້ອງສະເໜີແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຕໍ່ກະຊວງສາທາລະນະສຸກ ພາຍໃນເວລາ ສີ່ສິບຫ້າວັນ ກ່ອນແຜນສະບັບເດີມ ຈະໝົດອາຍຸ.

## ໝວດທີ 4
## ຄະນະທົບທວນ

### ມາດຕາ 25 ຄະນະທົບທວນ

ຄະນະທົບທວນ ແມ່ນ ຄະນະວິຊາການທີ່ບໍ່ປະຈຳການ ຊຶ່ງປະກອບມີ ຜູ້ຊ່ຽວຊານສະເພາະດ້ານ ຫຼື ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໂດຍໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີ ກະຊວງສາທາລະນະສຸກ ເພື່ອຊ່ວຍກະຊວງສາທາລະນະສຸກ ທົບທວນ ແລະ ຢັ້ງຢືນ ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຂອງໂຄງການລົງທຶນ ຫຼື ກິດຈະການ ທີ່ມີຄວາມສະຫຼັບຊັບຊ້ອນ, ມີຜົນກະທົບຕໍ່ສຸຂະພາບ ຢ່າງຫຼວງຫຼາຍ ຫຼື ຮ້າຍແຮງ.

ໃນກໍລະນີ ມີການແຕ່ງຕັ້ງຄະນະທົບທວນ ເຈົ້າຂອງໂຄງການ ຫຼື ກິດຈະການ ສາມາດສະເໜີແຕ່ງຕັ້ງຜູ້ຊ່ຽວຊານສະເພາະດ້ານ ປະກອບເຂົ້າໃນຄະນະທົບທວນໄດ້.

**ມາດຕາ 26 ເງື່ອນໄຂຂອງຄະນະທົບທວນ**

ຄະນະທົບທວນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຈັນຍາບັນ, ຈັນຍາທໍາ ຕໍ່ໜ້າທີ່ ໃນການທົບທວນ;
2. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ທີ່ຕິດພັນກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ຢ່າງໜ້ອຍ ຫ້າ ປີ;
3. ບໍ່ມີສ່ວນພົວພັນ ຫຼື ມີສ່ວນທີ່ກ່ຽວຂ້ອງ ກັບ ໂຄງການລົງທຶນ ຫຼື ກິດຈະການ ທີ່ກໍາລັງທົບທວນຢູ່ນັ້ນ.

**ມາດຕາ 27 ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຄະນະທົບທວນ**

ຄະນະທົບທວນ ມີສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄໍາເຫັນຕໍ່ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ;
2. ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ເຂົ້າຮ່ວມການລົງກວດກາພາກສະໜາມ ຢູ່ເຂດໂຄງການລົງທຶນ ຫຼື ກິດຈະການ ຕາມຄວາມຈໍາເປັນ;
3. ເປັນເອກະລາດໃນການທົບທວນ;
4. ໄດ້ຮັບຄ່າແຮງງານຕາມລະບຽບການ;
5. ຮັບຜິດຊອບຜົນໄດ້, ຜົນເສຍ ໃນໜ້າທີ່ທົບທວນຂອງຕົນ ແລະ ຢັ້ງຢືນການປະກອບຄໍາເຫັນ ເປັນລາຍລັກອັກສອນ ຕໍ່ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຂອງເຈົ້າຂອງໂຄງການ ຫຼື ກິດຈະການ ໃຫ້ກະຊວງສາທາລະນະສຸກ;
6. ປະຕິບັດໜ້າທີ່ດ້ວຍຄວາມຍຸຕິທໍາ, ວ່ອງໄວ ແລະ ປອດໃສ;
7. ລາຍງານຜົນຂອງການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ກະຊວງສາທາລະນະສຸກ;
8. ຮັກສາຄວາມລັບຂອງການທົບທວນຂອງຕົນ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ.

**ມາດຕາ 28 ງົບປະມານການເຄື່ອນໄຫວສໍາລັບຄະນະທົບທວນ**

ງົບປະມານ ສໍາລັບການເຄື່ອນໄຫວຂອງຄະນະທົບທວນ ເປັນຕົ້ນ ການປະສານງານ, ຕິດຕໍ່ພົວພັນ, ການຈັດກອງປະຊຸມ, ການລົງກວດກາພາກສະໜາມ ແມ່ນ ເປັນພັນທະຂອງເຈົ້າຂອງໂຄງການ ຫຼື ກິດຈະການ. ສໍາລັບຄ່າທົບທວນຂອງຄະນະທົບທວນ ແມ່ນນໍາໃຊ້ງົບປະມານຈາກຄ່າບໍລິການອອກໃບຢັ້ງຢືນ ການປະເມີນຜົນກະທົບຕໍ່ສຸຂະພາບ.

## ໝວດທີ 5
## ການມີສ່ວນຮ່ວມຂອງສັງຄົມ

**ມາດຕາ 29 ການມີສ່ວນຮ່ວມຂອງສັງຄົມ**

ການມີສ່ວນຮ່ວມຂອງສັງຄົມ ແມ່ນ ຂະບວນການປຶກສາຫາລື, ການສະໜອງຂໍ້ມູນ ຂ່າວສານ ແລະ ຮັບຄໍາຄິດຄໍາເຫັນຂອງທຸກພາກສ່ວນຂອງສັງຄົມ ກ່ຽວກັບໂຄງການລົງທຶນ ຫຼື ກິດຈະການ ໃນໄລຍະສ້າງ ແລະ

ພິຈາລະນາບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ພ້ອມທັງຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ໃນແຕ່ລະໄລຍະຂອງໂຄງການລົງທຶນ ຫຼື ກິດຈະການ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

ການມີສ່ວນຮ່ວມຂອງສັງຄົມ ມີໄລຍະ ດັ່ງນີ້:

1. ການກະກຽມ ແລະ ວາງແຜນໂຄງການລົງທຶນ ຫຼື ກິດຈະການ;
2. ການກໍ່ສ້າງ ແລະ ດຳເນີນໂຄງການລົງທຶນ ຫຼື ກິດຈະການ;
3. ການສິ້ນສຸດໂຄງການລົງທຶນ ຫຼື ກິດຈະການ.

ຂະແໜງການສາທາລະນະສຸກ, ຂະແໜງການທີ່ຮັບຜິດຊອບໂຄງການ ຫຼື ກິດຈະການ, ອົງການປົກຄອງທ້ອງຖິ່ນ ແລະ ເຈົ້າຂອງໂຄງການ ຫຼື ກິດຈະການ ມີຄວາມຮັບຜິດຊອບຮ່ວມກັນໃນການ ຮັບປະກັນ ແລະ ສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນວຽກງານປະເມີນຜົນກະທົບຕໍ່ສຸຂະພາບ.

**ມາດຕາ 30 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກະກຽມ ແລະ ວາງແຜນໂຄງການ ຫຼື ກິດຈະການ**

ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກະກຽມ ແລະ ວາງແຜນໂຄງການ ຫຼື ກິດຈະການ ມີ ດັ່ງນີ້:

1. ໃນໄລຍະສ້າງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ:
   - ເຈົ້າຂອງໂຄງການ ຫຼື ກິດຈະການ ເຜີຍແຜ່ແຜນການການມີສ່ວນຮ່ວມຂອງສັງຄົມ ພ້ອມທັງເກັບກຳຂໍ້ມູນພື້ນຖານ ໃນເຂດໂຄງການ ຫຼື ກິດຈະການ ແລະ ເຂດໃກ້ຄຽງ ເປັນຕົ້ນ ຂໍ້ມູນສະຖິຕິກ່ຽວກັບພົນລະເມືອງ, ເສດຖະກິດ-ສັງຄົມ, ສະພາບແວດລ້ອມ ແລະ ພະຍາດທ້ອງຖິ່ນ;
   - ເຈົ້າຂອງໂຄງການ ຫຼື ກິດຈະການ ສົມທົບກັບຂະແໜງການສາທາລະນະສຸກ ເຜີຍແຜ່ຂໍ້ມູນໃຫ້ແກ່ປະຊາຊົນໃນເຂດໂຄງການ ຫຼື ກິດຈະການ ແລະ ເຂດໃກ້ຄຽງ ແລະ ຜູ້ມີສ່ວນຮ່ວມອື່ນ ກ່ຽວກັບແຜນພັດທະນາໂຄງການ ຫຼື ກິດຈະການ, ຜົນກະທົບຕໍ່ສຸຂະພາບ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກໂຄງການ ຫຼື ກິດຈະການ ໂດຍການຈັດກອງປະຊຸມ ເຜີຍແຜ່ ຂັ້ນຕ່າງໆ ແລະ ຮູບການອື່ນ ທັງເປັນພາສາລາວ ແລະ ພາສາຊົນເຜົ່າ ໃນກໍລະນີ ມີຄວາມຈຳເປັນ.

2. ໄລຍະທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ, ຂະແໜງການສາທາລະນະສຸກ ສົມທົບກັບ ເຈົ້າຂອງໂຄງການ ຫຼື ກິດຈະການ ລົງກວດກາພາກສະໜາມ ແລະ ຈັດກອງປະຊຸມ ແບບມີສ່ວນຮ່ວມ ເພື່ອປຶກສາຫາລືຜ່ານບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຊຶ່ງມີ ຜູ້ໄດ້ຮັບຜົນກະທົບ, ບ້ານ, ຂະແໜງການຮັບຜິດຊອບໂຄງການ ຫຼື ກິດຈະການ, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມອື່ນ ໂດຍອີງໃສ່ຈຸດພິເສດຂອງກອງປະຊຸມ.

**ມາດຕາ 31 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກໍ່ສ້າງ ແລະ ດຳເນີນ ໂຄງການ ຫຼື ກິດຈະການ**

ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະກໍ່ສ້າງ ແລະ ດຳເນີນ ໂຄງການ ຫຼື ກິດຈະການ ມີ ດັ່ງນີ້:

1. ເຈົ້າຂອງໂຄງການ ຫຼື ກິດຈະການ ປະສານສົມທົບກັບຂະແໜງການສາທາລະນະສຸກ, ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອແຈ້ງໃຫ້ຜູ້ທີ່ຢູ່ໃນເຂດ ໂຄງການລົງທຶນ ຫຼື ກິດຈະການ ແລະ ເຂດໃກ້ຄຽງ ເປັນແຕ່ລະໄລຍະ ກ່ຽວກັບການດຳເນີນກິດຈະກຳ ຂອງໂຄງການລົງທຶນ ຫຼື ກິດຈະການ ທີ່ອາດຈະສົ່ງຜົນກະທົບຕໍ່ສຸຂະພາບ ເປັນຕົ້ນ ການຂົນສົ່ງ, ນຳໃຊ້, ເກັບຮັກສາວັດຖຸ ແລະ ສານເຄມີອັນຕະລາຍ, ສານລະເບີດ;

2. ເຈົ້າຂອງໂຄງການ ຫຼື ກິດຈະການ ປະສານສົມທົບກັບຂະແໜງການສາທາລະນະສຸກ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເຜີຍແຜ່ບັນດາເອກະສານ ກ່ຽວກັບສຸຂະພາບ ເປັນຕົ້ນ ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ, ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ, ບົດລາຍງານການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການຕ່າງໆ ໂດຍຜ່ານທາງໜັງສືພິມ, ໂທລະພາບ, ໂທລະໂຄ່ງ, ວິທະຍຸ, ເວັບໄຊ ຫຼື ສື່ສິ່ງພິມອື່ນ ເພື່ອໃຫ້ສັງຄົມໄດ້ປະກອບຄຳເຫັນ, ກວດສອບ

ການຈັດຕັ້ງປະຕິບັດ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ ຕາມຄູ່ມືແນະນຳສະເພາະ ຫຼື ແບບສອບຖາມ ຮູບແບບເອເລັກໂຕຣນິກ;

3. ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນ ສາມາດປະກອບຄຳເຫັນ ກ່ຽວກັບການຈັດຕັ້ງປະຕິບັດ ໂຄງການລົງທຶນ ຫຼື ກິດຈະການ ຜ່ານທາງໂທລະສັບສາຍດ່ວນ, ທາງເອເລັກໂຕຣນິກ, ສື່ ຄຳເຫັນ, ຄຳຮ້ອງທຸກ ຢ່າງເປັນລາຍລັກອັກສອນ ໃຫ້ເຈົ້າຂອງໂຄງການ ຫຼື ກິດຈະການ ຫຼື ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ຫຼື ຮູບການອື່ນ.

### ມາດຕາ 32 ການມີສ່ວນຮ່ວມຂອງສັງຄົມ ໃນໄລຍະສິ້ນສຸດໂຄງການ

ເຈົ້າຂອງໂຄງການ ຫຼື ກິດຈະການ ຕ້ອງແຈ້ງໃຫ້ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ ກ່ຽວກັບການດຳເນີນການປິດ ແລະ ບູລະນະຟື້ນຟູສິ່ງແວດລ້ອມ ຂອງໂຄງການລົງທຶນ ຫຼື ກິດຈະການຂອງຕົນ ພ້ອມທັງໃຫ້ສິດ ໃນການປະກອບຄຳເຫັນ ກ່ຽວກັບຜົນສຳເລັດ ແລະ ແກ້ໄຂບັນຫາຄົງຄ້າງ ໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ໃນໄລຍະສິ້ນສຸດໂຄງການລົງທຶນ ຫຼື ກິດຈະການ ຊຶ່ງຖືເປັນເງື່ອນໄຂ ໜຶ່ງ ໃຫ້ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາຢັ້ງຢືນການສິ້ນສຸດໂຄງການລົງທຶນ ຫຼື ກິດຈະການ.

## ໝວດທີ 6
## ການຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ

### ມາດຕາ 33 ການຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ

ການຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ການຮັບຮອງເອົາບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ ໂດຍກະຊວງສາທາລະນະສຸກ.

### ມາດຕາ 34 ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ

ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ໜັງສືຢັ້ງຢືນການຮັບຮອງຜົນຂອງການປະເມີນຜົນກະທົບຕໍ່ສຸຂະພາບ ທີ່ອອກໃຫ້ແກ່ໂຄງການລົງທຶນ ຫຼື ກິດຈະການ.

ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ມີອາຍຸການນຳໃຊ້ໄດ້ຕະຫຼອດໄລຍະເວລາຂອງ ໂຄງການລົງທຶນ ຫຼື ກິດຈະການ. ສຳລັບແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຕ້ອງໄດ້ປັບປຸງ ທຸກ ສອງ ຫາ ຫ້າ ປີ ຕາມແຕ່ລະປະເພດໂຄງການລົງທຶນ ຫຼື ກິດຈະການ.

ຖ້າຫາກເຈົ້າຂອງໂຄງການ ຫຼື ກິດຈະການ ບໍ່ດຳເນີນກິດຈະການໃດໜຶ່ງພາຍໃນເວລາ ສອງປີ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ ໃບຢັ້ງຢືນດັ່ງກ່າວ ກໍຈະຕົກໄປ. ຖ້າມີຈຸດປະສົງສືບຕໍ່ພັດທະນາ ໂຄງການລົງທຶນ ຫຼື ກິດຈະການ, ເຈົ້າຂອງໂຄງການ ຫຼື ກິດຈະການ ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ລວມທັງສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ແລ້ວນຳສະເໜີຕໍ່ ກະຊວງສາທາລະນະສຸກ ຄົ້ນຄວ້າພິຈາລະນາຮັບຮອງຄືນໃໝ່.

### ມາດຕາ 35 ເງື່ອນໄຂການອອກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ

ການອອກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ມີເງື່ອນໄຂ ດັ່ງນີ້:

1. ຕ້ອງສຳເລັດທຸກຂະບວນການຂອງການປະເມີນຜົນກະທົບຕໍ່ສຸຂະພາບ ໂດຍການມີສ່ວນຮ່ວມຂອງສັງຄົມ;

2. ມີຂໍ້ມູນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງກັບຄວາມເປັນຈິງ ແລະ ໄດ້ເປີດເຜີຍໃຫ້ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນ ຮັບຮູ້;

3. ກຳນົດງົບປະມານໃຫ້ຈະແຈ້ງ ແລະ ພຽງພໍໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ.

**ມາດຕາ 36 ເງື່ອນໄຂການອອກໃບຢັ້ງຢືນຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ**

ເງື່ອນໄຂການອອກໃບຢັ້ງຢືນຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ມີ ດັ່ງນີ້:

1. ສະຫຼຸບການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ໃນໄລຍະຜ່ານມາ ແລະ ສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ສຳລັບໄລຍະຕໍ່ໄປ ແລ້ວສົ່ງໃຫ້ກະຊວງສາທາລະນະສຸກ ຢ່າງໜ້ອຍ ຫົກສິບວັນ ກ່ອນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກຈະໝົດອາຍຸ;
2. ມີດບັນທຶກການລົງຕິດຕາມ ກວດກາການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂອງກະຊວງສາທາລະນະສຸກ.

**ມາດຕາ 37 ການປະຕິເສດການອອກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ**

ການອອກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ຈະຖືກປະຕິເສດ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ສຸຂະພາບຂອງປະຊາຊົນ;
2. ມີຜົນກະທົບແບບສະສົມ ຊຶ່ງເກີນຄວາມສາມາດ ທີ່ຮ່າງກາຍມະນຸດສາມາດຮັບໄດ້;
3. ລະເມີດກົດໝາຍ.

**ມາດຕາ 38 ການກັກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ**

ໂຄງການລົງທຶນ ຫຼື ກິດຈະການ ຈະຖືກກັກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາທາລະນະສຸກ ທີ່ສົ່ງຜົນກະທົບບໍ່ຮ້າຍແຮງຕໍ່ສຸຂະພາບ;
2. ບໍ່ປະຕິບັດຕາມເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ໃບຢັ້ງຢືນກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ;
3. ບໍ່ດຳເນີນການຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຕາມກຳນົດເວລາ;
4. ບໍ່ປະຕິບັດພັນທະທາງດ້ານການເງິນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
5. ບໍ່ປະຕິບັດຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ;
6. ປົກປັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນກ່ຽວກັບຜົນກະທົບຕໍ່ສຸຂະພາບ ທີ່ບໍ່ ຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງ;
7. ບໍ່ປະຕິບັດການແກ້ໄຂບັນຫາສຸຂະພາບ ພາຍຫຼັງທີ່ໄດ້ຮັບໜັງສືແຈ້ງເຕືອນຈາກຂະແໜງການສາທາລະນະສຸກ;
8. ມີຜົນກະທົບຫຼາຍ ຕໍ່ສຸຂະພາບ.

ການກັກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງມີກຳນົດເວລາອັນແນ່ນອນ ແລະ ຄຳແນະນຳ ເພື່ອໃຫ້ເຈົ້າຂອງໂຄງການ ຫຼື ກິດຈະການ ປັບປຸງ ແລະ ແກ້ໄຂ.

ພາຍຫຼັງທີ່ກະຊວງສາທາລະນະສຸກ ໄດ້ກັກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ພ້ອມທັງແຈ້ງໃຫ້ຂະແໜງການທີ່ຮັບຜິດຊອບໂຄງການ ຫຼື ກິດຈະການ ຊາບ, ຂະແໜງການດັ່ງກ່າວ ຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ຫຼື ກິດຈະການ ເພື່ອໂຈະການດຳເນີນໂຄງການລົງທຶນ ຫຼື ກິດຈະການ ຕາມກົດໝາຍ.

**ມາດຕາ 39 ການຖອນໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ**

ໂຄງການລົງທຶນ ຫຼື ກິດຈະການ ຈະຖືກຖອນໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ຕາມແຕ່ລະກໍລະນີ ດັ່ງນີ້:

1. ບໍ່ປັບປຸງ ແລະ ແກ້ໄຂ ຕາມຄຳແນະນຳ ທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງດຳລັດສະບັບນີ້;

2. ບໍ່ດຳເນີນກິດຈະການ ພາຍໃນກຳນົດ ສອງປີ ນັບແຕ່ວັນໄດ້ຮັບໃບຢັ້ງຢືນເປັນຕົ້ນໄປ;

3. ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສາທາລະນະສຸກ ທີ່ສ້າງຜົນກະທົບຕໍ່ສຸຂະພາບຢ່າງຮ້າຍແຮງ.

ພາຍຫຼັງທີ່ກະຊວງສາທາລະນະສຸກ ໄດ້ຖອນໃບຢັ້ງຢືນກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງແຈ້ງໃຫ້ຂະແໜງການທີ່ຮັບຜິດຊອບໂຄງການ ຫຼື ກິດຈະການ ຊາບ, ຂະແໜງການດັ່ງກ່າວ ຕ້ອງຖອນໃບອະນຸຍາດດຳເນີນໂຄງການ ຫຼື ກິດຈະການ ຕາມກົດໝາຍ.

## ໝວດທີ 7
## ການຕິດຕາມ ກວດກາວຽກງານສາທາລະນະສຸກ

### ມາດຕາ 40 ການຕິດຕາມ ກວດກາວຽກງານສາທາລະນະສຸກ

ການຕິດຕາມ ກວດກາວຽກງານສາທາລະນະສຸກ ແມ່ນ ການດຳເນີນການຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ ເປັນຕົ້ນ ເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ, ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ.

### ມາດຕາ 41 ໄລຍະການຕິດຕາມ ກວດກາວຽກງານສາທາລະນະສຸກ

ການຕິດຕາມ ກວດກາວຽກງານສາທາລະນະສຸກ ມີ ສາມ ໄລຍະ ດັ່ງນີ້:

1. ການຕິດຕາມ ກວດກາໄລຍະກໍ່ສ້າງ;
2. ການຕິດຕາມ ກວດກາໄລຍະດຳເນີນງານ;
3. ການຕິດຕາມ ກວດກາໄລຍະສິ້ນສຸດໂຄງການລົງທຶນ ຫຼື ກິດຈະການ.

### ມາດຕາ 42 ຄວາມຮັບຜິດຊອບການຕິດຕາມ ກວດກາວຽກງານສາທາລະນະສຸກ

ຄວາມຮັບຜິດຊອບໃນການຕິດຕາມ ກວດກາວຽກງານສາທາລະນະສຸກ ມີ ດັ່ງນີ້:

1. ເຈົ້າຂອງໂຄງການ ຫຼື ກິດຈະການ;
2. ຂະແໜງການສາທາລະນະສຸກ.

### ມາດຕາ 43 ຄວາມຮັບຜິດຊອບການຕິດຕາມ ກວດກາວຽກງານສາທາລະນະສຸກ ໂດຍເຈົ້າຂອງໂຄງການ ຫຼື ກິດຈະການ

ເຈົ້າຂອງໂຄງການ ຫຼື ກິດຈະການ ເປັນຜູ້ດຳເນີນການຕິດຕາມ ກວດກາດ້ວຍຕົນເອງ ຢ່າງເປັນປະຈຳ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ ໃຫ້ມີປະສິດທິຜົນ ດ້ວຍການສ້າງລະບົບການຕິດຕາມ ກວດກາ ດັ່ງນີ້:

1. ແຕ່ງຕັ້ງພະນັກງານທີ່ມີຄຸນວຸດທິສະເພາະດ້ານ ແລະ ສ້າງຕັ້ງໜ່ວຍງານຄຸ້ມຄອງວຽກງານສຸຂະພາບ ເພື່ອຮັບຜິດຊອບຈັດຕັ້ງປະຕິບັດ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານດ້ານສາທາລະນະສຸກ ແລະ ປະສານງານກັບອົງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງ;

2. ປະກອບອຸປະກອນປ້ອງກັນຜົນກະທົບຕໍ່ສຸຂະພາບ ຮັບໃຊ້ພາກສະໜາມ ທີ່ໄດ້ມາດຕະຖານ ແລະ ພຽງພໍ ເປັນຕົ້ນ ອຸປະກອນປ້ອງກັນ ກິ່ນ, ແສງ, ສຽງ, ຝຸ່ນລະອອງ;

3. ໃຫ້ການຮ່ວມມືກັບຂະແໜງການສາທາລະນະສຸກ ໃນການຕິດຕາມ ກວດກາ;

4. ລາຍງານຜົນການຕິດຕາມ ກວດກາ ໃຫ້ແກ່ກະຊວງສາທາລະນະສຸກ ປະຈຳ ເດືອນ, ໄຕມາດ ແລະ ປະຈຳປີ ຢ່າງເປັນປົກກະຕິ.

**ມາດຕາ 44 ຄວາມຮັບຜິດຊອບການຕິດຕາມ ກວດກາວຽກງານສາທາລະນະສຸກ ໂດຍຂະແໜງການສາທາລະນະສຸກ**

ຂະແໜງການສາທາລະນະສຸກ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການຕິດຕາມ ກວດກາວຽກງານສາທາລະນະສຸກ ເປັນຕົ້ນ ເງື່ອນໄຂຂອງໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ, ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ພ້ອມທັງໃຫ້ຄຳແນະນຳ, ແຈ້ງເຕືອນ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ ແລ້ວລາຍງານຜົນການຕິດຕາມ ກວດກາ ໃຫ້ຂັ້ນເທິງຖັດຕົນ ເປັນແຕ່ລະໄລຍະ ດັ່ງນີ້:

1. ກະຊວງສາທາລະນະສຸກ ດຳເນີນການຕິດຕາມ ກວດກາ ໜຶ່ງ ຄັ້ງຕໍ່ປີ;
2. ພະແນກສາທາລະນະສຸກ ຂັ້ນແຂວງ ດຳເນີນການຕິດຕາມ ກວດກາ ສອງ ຄັ້ງຕໍ່ປີ;
3. ຫ້ອງການສາທາລະນະສຸກ ຂັ້ນເມືອງ ດຳເນີນການຕິດຕາມ ກວດກາ ສາມ ຄັ້ງຕໍ່ປີ.

ໃນກໍລະນີທີ່ມີຄວາມຈຳເປັນ ຂະແໜງການສາທາລະນະສຸກແຕ່ລະຂັ້ນ ສາມາດດຳເນີນການຕິດຕາມ ກວດກາ ເວລາໃດກໍໄດ້.

**ມາດຕາ 45 ການລາຍງານຜົນການຕິດຕາມ ກວດກາ ໂດຍເຈົ້າຂອງໂຄງການ ຫຼື ກິດຈະການ**

ເຈົ້າຂອງໂຄງການ ຫຼື ກິດຈະການ ລາຍງານຜົນການຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ໃຫ້ກະຊວງສາທາລະນະສຸກ ເປັນປົກກະຕິຕາມ ເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ. ຖ້າຫາກເຫັນວ່າ ມີຄວາມສ່ຽງໃນການເກີດອຸບປະຕິເຫດ, ເກີດເຫດການສຸກເສີນ ຫຼື ເກີດການລະເມີດພັນທະໃດໜຶ່ງ ທີ່ສົ່ງຜົນກະທົບຢ່າງຫຼວງຫຼາຍ ຫຼື ຮ້າຍແຮງຕໍ່ສຸຂະພາບ ຕ້ອງລາຍງານເຫດການດັ່ງກ່າວ ໃຫ້ຫ້ອງການສາທາລະນະສຸກ ຂັ້ນເມືອງ ໂດຍທັນທີ ແລະ ລາຍງານເບື້ອງຕົ້ນກ່ຽວກັບສະພາບການທີ່ເກີດຂຶ້ນ ເປັນລາຍລັກອັກສອນພາຍໃນ ຊາວສີ່ ຊົ່ວໂມງ.

**ມາດຕາ 46 ງົບປະມານການຕິດຕາມ ກວດກາວຽກງານສາທາລະນະສຸກ**

ງົບປະມານທີ່ນຳໃຊ້ ໃນການຕິດຕາມ ກວດກາ ແມ່ນ ເຈົ້າຂອງໂຄງການ ຫຼື ກິດຈະການ ເປັນຜູ້ສະໜອງ ໂດຍອີງຕາມ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ທີ່ຖືກຮັບຮອງ ຫຼື ສັນຍາ.

## ໝວດທີ 8
## ສິດ ແລະ ພັນທະ ຂອງຜູ້ໄດ້ຮັບຜົນກະທົບ ແລະ ເຈົ້າຂອງໂຄງການ ຫຼື ກິດຈະການ

**ມາດຕາ 47 ສິດ ຂອງຜູ້ໄດ້ຮັບຜົນກະທົບຈາກ ໂຄງການລົງທຶນ ຫຼື ກິດຈະການ**

ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການ ມີສິດ ດັ່ງນີ້:

1. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບຜົນປະໂຫຍດ, ຜົນກະທົບຕໍ່ສຸຂະພາບ ຈາກໂຄງການລົງທຶນ ຫຼື ກິດຈະການ;
2. ໄດ້ຮັບການປົກປ້ອງດ້ານສຸຂະພາບ, ກວດສຸຂະພາບ, ໄດ້ຮັບການປິ່ນປົວ ແລະ ການຟື້ນຟູສຸຂະພາບ ຕາມແຕ່ລະກໍລະນີ;
3. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ການປະເມີນຜົນກະທົບຕໍ່ສຸຂະພາບ;
4. ສະເໜີຕໍ່ເຈົ້າຂອງໂຄງການ ຫຼື ກິດຈະການ ຫຼື ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນການແກ້ໄຂ ກ່ຽວກັບຜົນກະທົບຕໍ່ສຸຂະພາບ ຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ເຫັນວ່າ ບໍ່ຖືກຕ້ອງ ແລະ ບໍ່ເປັນທຳ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 ພັນທະ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການ**

ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການ ມີພັນທະ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບສະພາບສາທາລະນະສຸກ ໃນຂອບເຂດໂຄງການລົງທຶນ ຫຼື ກິດຈະການ ແລະ ເຂດໃກ້ຄຽງ;

2. ລາຍງານ ກ່ຽວກັບຜົນກະທົບຕໍ່ສຸຂະພາບ ທີ່ເກີດຈາກໂຄງການລົງທຶນ ຫຼື ກິດຈະການ ເປັນລາຍລັກອັກສອນ, ປາກເປົ່າ ຫຼື ຜ່ານສື່ໃນຮູບແບບຕ່າງໆ ຕໍ່ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ;

3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 49 ສິດ ຂອງເຈົ້າຂອງໂຄງການ ຫຼື ກິດຈະການ ໃນການປະເມີນຜົນກະທົບຕໍ່ສຸຂະພາບ**

ໃນການປະເມີນຜົນກະທົບຕໍ່ສຸຂະພາບ ເຈົ້າຂອງໂຄງການ ຫຼື ກິດຈະການ ມີສິດ ດັ່ງນີ້:

1. ຄັດເລືອກ ເອົາຜູ້ບໍລິການປະເມີນຜົນກະທົບຕໍ່ສຸຂະພາບ ເພື່ອດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ;

2. ລົງເກັບກຳຂໍ້ມູນກ່ຽວກັບວຽກງານສາທາລະນະສຸກ ທີ່ຕິດພັນກັບໂຄງການລົງທຶນ ຫຼື ກິດຈະການຂອງຕົນ;

3. ປະສານສົມທົບກັບ ຂະແໜງການສາທາລະນະສຸກ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ;

4. ຕິດຕາມ, ທວງຖາມເອກະສານຕ່າງໆ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ ນຳບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

5. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ວຽກງານການປະເມີນຜົນກະທົບຕໍ່ສຸຂະພາບ;

6. ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນການແກ້ໄຂບັນຫາທີ່ເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ເປັນທຳຕໍ່ຕົນເອງ;

7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 50 ພັນທະ ຂອງເຈົ້າຂອງໂຄງການ ຫຼື ກິດຈະການ ໃນການປະເມີນຜົນກະທົບຕໍ່ສຸຂະພາບ**

ໃນການປະເມີນຜົນກະທົບຕໍ່ສຸຂະພາບ ເຈົ້າຂອງໂຄງການ ຫຼື ກິດຈະການ ມີພັນທະ ດັ່ງນີ້:

1. ຮັບຜິດຊອບຕໍ່ຂໍ້ມູນທີ່ກຳນົດໄວ້ໃນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ;

2. ຮັບຜິດຊອບຄ່າໃຊ້ຈ່າຍກ່ຽວກັບ ການລົງກວດກາພາກສະໜາມ, ກອງປະຊຸມແຕ່ລະຂັ້ນ, ການເຄື່ອນໄຫວຂອງຄະນະທົບທວນ ລວມທັງການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກວຽກງານສາທາລະນະສຸກ;

3. ເສຍຄ່າທຳນຽມ, ຄ່າບໍລິການຕ່າງໆ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;

4. ປັບປຸງບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຕາມຄຳເຫັນຂອງກະຊວງສາທາລະນະສຸກ;

5. ສ້າງຕັ້ງໜ່ວຍງານສະເພາະ ເພື່ອຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ຂອງໂຄງການ ຫຼື ກິດຈະການ;

6. ຮັບຜິດຊອບຜົນກະທົບຕໍ່ສຸຂະພາບ ທີ່ເກີດຈາກ ການດຳເນີນໂຄງການ ຫຼື ກິດຈະການຂອງຕົນ;

7. ປະຕິບັດຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ;

8. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ຂອງຜູ້ໄດ້ຮັບຜົນກະທົບ ຈາກໂຄງການລົງທຶນ ຫຼື ກິດຈະການ ຂອງຕົນ ໃຫ້ທັນກັບສະພາບການ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ການດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ

### ມາດຕາ 51 ການດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງແຈ້ງຂຶ້ນທະບຽນນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ ພາຍຫຼັງໄດ້ໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ນຳກະຊວງສາທາລະນະສຸກ.

### ມາດຕາ 52 ເງື່ອນໄຂການດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ

ຜູ້ທີ່ຈະດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ສຳນັກງານ, ພາຫະນະ ແລະ ທຶນຈົດທະບຽນ ຕາມທີ່ກະຊວງສາທາລະນະສຸກ ກຳນົດ;
3. ຜູ້ຊ່ຽວຊານສະເພາະດ້ານ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ ຢ່າງໜ້ອຍ ສອງ ຄົນ;
4. ພະນັກງານວິຊາການທີ່ມີຄວາມຮູ້ຄວາມສາມາດທາງດ້ານສາທາລະນະສຸກ ຢ່າງພຽງພໍ;
5. ເງື່ອນໄຂອື່ນ ທີ່ກະຊວງສາທາລະນະສຸກເຫັນວ່າຈຳເປັນ.

### ມາດຕາ 53 ເອກະສານປະກອບ

ເອກະສານປະກອບ ການຂໍອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ມີ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ຕາມແບບພິມ;
2. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;
3. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ, ໃບມອບສິດ ຂອງຜູ້ຕາງໜ້າ ໃນກໍລະນີທີ່ໃຫ້ຜູ້ອື່ນ ມາດຳເນີນເອກະສານແທນ;
4. ບົດວິພາກເສດຖະກິດ-ເຕັກນິກ ຫຼື ບົດສະເໜີແຜນການ ຫຼື ໂຄງການ;
5. ສຳເນົາເອກະສານຢັ້ງຢືນຄຸນວຸດທິຂອງຜູ້ຊ່ຽວຊານສະເພາະດ້ານ;
6. ເອກະສານອື່ນທີ່ຈຳເປັນ ຕາມການຮຽກຮ້ອງຂອງກະຊວງສາທາລະນະສຸກ.

### ມາດຕາ 54 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ

ພາຍຫຼັງກະຊວງສາທາລະນະສຸກ ໄດ້ຮັບສຳນວນເອກະສານຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ພາຍໃນເວລາ ສິບວັນ ລັດຖະການ.

ກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ຕາມກຳນົດເວລາດັ່ງກ່າວໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຂໍອະນຸຍາດ ຊາບ.

ໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ມີອາຍຸການນຳໃຊ້ ສອງ ປີ ແລະ ສາມາດຕໍ່ໄດ້.

**ມາດຕາ 55 ການຕໍ່ອາຍຸການນຳໃຊ້ໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ**

ຜູ້ດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ຕ້ອງດຳເນີນການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ກ່ອນຈະໝົດອາຍຸການນຳໃຊ້ ສາມສິບວັນ, ໂດຍຍື່ນຄຳຮ້ອງຂໍຕໍ່ອາຍຸການນຳໃຊ້ນຳກະຊວງສາທາລະນະສຸກ.

ກະຊວງສາທາລະນະສຸກ ພິຈາລະນາການຕໍ່ ຫຼື ບໍ່ຕໍ່ ໃບອະນຸຍາດດຳເນີນທຸລະກິດ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ຜູ້ດຳເນີນທຸລະກິດ ບໍ່ມາຕໍ່ໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ກ່ອນໝົດອາຍຸ ຖືວ່າສະຫຼະສິດ ແລະ ຕ້ອງດຳເນີນການຂໍອະນຸຍາດດຳເນີນທຸລະກິດຄືນໃໝ່ ຕາມທີ່ກຳນົດໄວ້ ໃນມາດຕາ 51 ຂອງດຳລັດສະບັບນີ້.

**ມາດຕາ 56 ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ**

ຜູ້ດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມການອະນຸຍາດ, ຕາມມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
2. ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ຂອງເຈົ້າໜ້າທີ່, ພະນັກງານ-ລັດຖະກອນ;
4. ປະກອບສ່ວນ ທາງດ້ານທຶນຮອນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;
5. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ;
6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 ການໂຈະ ການດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ**

ການດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດບໍ່ຖືກຕ້ອງຕາມການອະນຸຍາດ;
3. ບໍ່ປະຕິບັດຕາມການກ່າວເຕືອນ;
4. ລະເມີດ ກົດໝາຍ, ລະບຽບການ ຫຼື ມີພຶດຕິກຳອື່ນ ທີ່ສ້າງຄວາມເສຍຫາຍ.

ການໂຈະການດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ເພື່ອໃຫ້ຫົວໜ່ວຍທຸລະກິດ ປັບປຸງ, ແກ້ໄຂບັນຫາໃດໜຶ່ງ ໃນເວລາອັນແນ່ນອນ ໂດຍການແຈ້ງເປັນລາຍລັກອັກສອນ ໃຫ້ແກ່ຜູ້ດຳເນີນທຸລະກິດ ຮັບຊາບ.

**ມາດຕາ 58 ຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ບໍ່ປັບປຸງ ແລະ ແກ້ໄຂຕາມການແຈ້ງໂຈະ;
3. ໃຫ້ຜູ້ອື່ນນຳໃຊ້ໃບອະນຸຍາດດຳເນີນທຸລະກິດຂອງຕົນ;
4. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາທາລະນະສຸກ ທີ່ສ້າງຜົນກະທົບຕໍ່ສຸຂະພາບຢ່າງຮ້າຍແຮງ.

## ໝວດທີ 10
## ຂໍ້ມູນ ຂ່າວສານ ແລະ ການນຳໃຊ້ເຕັກໂນໂລຊີ

**ມາດຕາ 59 ຂໍ້ມູນ ຂ່າວສານ ການປະເມີນຜົນກະທົບຕໍ່ສຸຂະພາບ**

ຂໍ້ມູນ ຂ່າວສານ ການປະເມີນຜົນກະທົບຕໍ່ສຸຂະພາບ ແມ່ນ ຂໍ້ມູນ ຂ່າວສານ, ຄວາມຮູ້ ກ່ຽວກັບວຽກງານ ປະເມີນຜົນກະທົບຕໍ່ສຸຂະພາບ.

ຂະແໜງການສາທາລະນະສຸກ ເປັນເຈົ້າການ ແລະ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າ, ເກັບກຳ, ສັງລວມ, ວິເຄາະ ວິໄຈ, ສ້າງ, ຄຸ້ມຄອງ, ນຳໃຊ້ ແລະ ພັດທະນາລະບົບ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ຄົບຊຸດ, ທັນສະໄໝ ແລະ ຍືນຍົງ ໂດຍເຊື່ອມໂຍງເຂົ້າກັບຖານຂໍ້ມູນສາທາລະນະສຸກ ເພື່ອເຜີຍແຜ່ ແລະ ອຳນວຍຄວາມສະດວກໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າເຖິງ ແລະ ນຳໃຊ້.

**ມາດຕາ 60 ການນຳໃຊ້ເຕັກໂນໂລຊີເຂົ້າໃນວຽກງານປະເມີນຜົນກະທົບຕໍ່ສຸຂະພາບ**

ຂະແໜງການສາທາລະນະສຸກ ເປັນເຈົ້າການ ແລະ ປະສານສົມທົບ ກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ໃນຂອບເຂດທົ່ວປະເທດ ເປັນຕົ້ນ ການນຳໃຊ້ອຸປະກອນເອເລັກໂຕຣນິກ, ເວັບໄຊ.

## ໝວດທີ 11
## ຂໍ້ຫ້າມ

**ມາດຕາ 61 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ, ຕາປະທັບ, ລາຍເຊັນ ແລະ ເອກະສານອື່ນ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ;
3. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;
4. ປົດບັງ, ຊຸກເຊື່ອງ ຫຼື ໃຫ້ ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
5. ເປັນສື່ກາງ ໃນການໃຫ້ ຫຼື ຮັບສິນບົນ;
6. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະເມີນຜົນກະທົບຕໍ່ສຸຂະພາບ;
7. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ໂດຍບໍ່ມີມູນຄວາມຈິງ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 62 ຂໍ້ຫ້າມ ສຳລັບເຈົ້າຂອງໂຄງການ ຫຼື ກິດຈະການ**

ຫ້າມ ເຈົ້າຂອງໂຄງການ ຫຼື ກິດຈະການ ມີພຶດຕິກຳ ດັ່ງນີ້:

1. ກໍ່ສ້າງ ແລະ ດຳເນີນໂຄງການລົງທຶນ ຫຼື ກິດຈະການ ທີ່ມີເງື່ອນໄຂໃນການປະເມີນຜົນກະທົບຕໍ່ສຸຂະພາບ ໂດຍບໍ່ໄດ້ຮັບໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ;
2. ດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ດ້ວຍຕົນເອງ;
3. ຊື້ຈ້າງ, ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ;

4. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ;

5. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

6. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ໂດຍບໍ່ມີມູນຄວາມຈິງ;

7. ປອມແປງເອກະສານ, ລາຍເຊັນ, ຕາປະທັບ ແລະ ໃຫ້ຂໍ້ມູນ ຂ່າວສານບໍ່ຖືກກັບຄວາມເປັນຈິງ;

8. ລະເມີດພັນທະ ແລະ ເງື່ອນໄຂ ຂອງໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ;

9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 63 ຂໍ້ຫ້າມ ສໍາລັບຜູ້ດໍາເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ**

ຫ້າມ ຜູ້ດໍາເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ຕາປະທັບຂອງຕົນ ປະທັບໃສ່ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ທີ່ບໍ່ໄດ້ດໍາເນີນດ້ວຍຕົນເອງ;

2. ດໍາເນີນການກວດສຸຂະພາບດ້ວຍຕົນເອງ;

3. ຊື້ຈ້າງ, ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

4. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ;

5. ປະຕິເສດການຮ່ວມມື ຫຼື ຂັດຂວາງ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

6. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ໂດຍບໍ່ມີມູນຄວາມຈິງ;

7. ປອມແປງເອກະສານ, ລາຍເຊັນ, ຕາປະທັບ ແລະ ໃຫ້ຂໍ້ມູນ ຂ່າວສານບໍ່ຖືກກັບຄວາມເປັນຈິງ;

8. ລະເມີດພັນທະ ແລະ ເງື່ອນໄຂຂອງໃບອະນຸຍາດດໍາເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ;

9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 64 ຫ້າມ ສໍາລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ຫຼື ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ມີພຶດຕິກໍາ ດັ່ງນີ້:

1. ສຶກສາ ແລະ ສ້າງ ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາວຽກງານສາທາລະນະສຸກ;

2. ເມີນເສີຍ, ເລີນເລີ້ ຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງ ການພິຈາລະນາເອກະສານ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ;

3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທໍາ, ລໍາອຽງ, ບໍ່ຖືກຕ້ອງ ຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ແລະ ລວມໝູ່;

4. ເປັນທີ່ປຶກສາໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ;

5. ສວຍໃຊ້ສິດອໍານາດ, ຕໍາແໜ່ງ, ໜ້າທີ່, ຂໍເອົາ, ທວງເອົາ, ຮັບເອົາ ສິນບົນ ຈາກເຈົ້າຂອງໂຄງການ ຫຼື ກິດຈະການ;

6. ອອກໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

7. ປອມແປງເອກະສານ, ລາຍເຊັນ ແລະ ຕາປະທັບ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ;

8. ດຳເນີນການທົບທວນບົດລາຍງານຂອບເຂດການສຶກສາ ແລະ ໜ້າວຽກ, ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ລວມທັງລົງຕິດຕາມກວດກາພາກສະໜາມ ຂອງໂຄງການລົງທຶນ ຫຼື ກິດຈະການ ທີ່ຕົນເອງມີສ່ວນກ່ຽວຂ້ອງ;

9. ທຳລາຍຫຼັກຖານ, ເອກະສານ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 12
## ການຄຸ້ມຄອງ ແລະ ກວດກາ

### ມາດຕາ 65 ອົງການຄຸ້ມຄອງ ແລະ ກວດກາ ວຽກງານປະເມີນຜົນກະທົບຕໍ່ສຸຂະພາບ

ກະຊວງສາທາລະນະສຸກ ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ແລະ ເປັນເຈົ້າການ ໃນການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ຂັ້ນແຂວງ;
3. ຫ້ອງການສາທາລະນະສຸກ ຂັ້ນເມືອງ;
4. ຄະນະກຳມະການປົກຄອງບ້ານ.

### ມາດຕາ 66 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ

ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ມາເປັນ ນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

4. ສ້າງ ແລະ ປັບປຸງ ວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ທັນສະໄໝ;

5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

6. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

7. ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ແກ່ພະນັກງານຂອງຂະແໜງການສາທາລະນະສຸກ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

8. ໃຫ້ຄຳແນະນຳທາງດ້ານວິຊາການ ແກ່ເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຜູ້ດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

9. ກຳນົດເງື່ອນໄຂສຳລັບໂຄງການລົງທຶນ ຫຼື ກິດຈະການ ທີ່ຕ້ອງດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ;

10. ລົງກວດກາພາກສະໜາມ ແລະ ຈັດກອງປະຊຸມປຶກສາຫາລື ໃນໄລຍະທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ;

11. ແຕ່ງຕັ້ງ ຄະນະທົບທວນ ມາຊ່ວຍການທົບທວນ ບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ;

12. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ;

13. ອອກ, ກັກ ຫຼື ຖອນ ໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ;

14. ອອກໜັງສືຢັ້ງຢືນຕໍ່ອາຍຸແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ;

15. ອອກໃບອະນຸຍາດດຳເນີນ, ໂຈະການດຳເນີນ ຫຼື ຖອນໃບອະນຸຍາດດຳເນີນ ທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ;

16. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງຜູ້ທີ່ໄດ້ຮັບຜົນກະທົບ ແລະ ເຈົ້າຂອງໂຄງການ ຫຼື ກິດຈະການ;

17. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

18. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລະ ເຈົ້າຂອງໂຄງການ ຫຼື ກິດຈະການ ໃນວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

19. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

20. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ລັດຖະບານຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ຂັ້ນແຂວງ**

ພະແນກສາທາລະນະສຸກ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ມາເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

3. ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ແກ່ພະນັກງານ-ລັດຖະກອນທີ່ຢູ່ໃນການຄຸ້ມຄອງຂອງຕົນ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

4. ໃຫ້ຄຳແນະນຳທາງດ້ານວິຊາການ ແກ່ເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຜູ້ດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

5. ເຂົ້າຮ່ວມການກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລື ໃນໄລຍະທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຕາມການເຊີນ;

6. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ;

7. ລາຍງານຕໍ່ກະຊວງສາທາລະນະສຸກ ເມື່ອພົບເຫັນໂຄງການລົງທຶນ ຫຼື ກິດຈະການ ມີຄວາມສ່ຽງ, ສ້າງຜົນກະທົບຢ່າງຫຼວງຫຼາຍ ຫຼື ຮຸນແຮງຕໍ່ສຸຂະພາບ;

8. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

9. ປະສານສົມທົບກັບພະແນກການ, ອົງການອື່ນ ຂັ້ນແຂວງ, ຄະນະກຳມະການປົກຄອງ ຂັ້ນເມືອງ ທີ່ກ່ຽວຂ້ອງ ແລະ ເຈົ້າຂອງໂຄງການ ຫຼື ກິດຈະການ ໃນການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

10. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ກະຊວງສາທາລະນະສຸກ ແລະ ຄະນະກຳມະການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກ ຂັ້ນເມືອງ**

ຫ້ອງການສາທາລະນະສຸກ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

3. ສະເໜີ ສ້າງ ແລະ ຝຶກອົບຮົມ ໃຫ້ແກ່ພະນັກງານ-ລັດຖະກອນທີ່ຢູ່ໃນການຄຸ້ມຄອງຂອງຕົນ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

4. ໃຫ້ຄຳແນະນຳທາງດ້ານວິຊາການ ແກ່ເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຜູ້ດຳເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

5. ເຂົ້າຮ່ວມການກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລື ໃນໄລຍະທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ ຕາມການເຊີນ;

6. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ຂອງໂຄງການລົງທຶນ ຫຼື ກິດຈະການ;

7. ລາຍງານຕໍ່ພະແນກສາທາລະນະສຸກ ຂັ້ນແຂວງ ເມື່ອພົບເຫັນໂຄງການລົງທຶນ ຫຼື ກິດຈະການ ມີຄວາມສ່ຽງ, ສ້າງຜົນກະທົບຢ່າງຫຼວງຫຼາຍ ຫຼື ຮຸນແຮງຕໍ່ສຸຂະພາບ;

8. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

9. ປະສານສົມທົບກັບ ຫ້ອງການ, ອົງການອື່ນ ຂັ້ນເມືອງ, ຄະນະກຳມະການປົກຄອງບ້ານແສງ ທີ່ກ່ຽວຂ້ອງ ແລະ ເຈົ້າຂອງໂຄງການ ຫຼື ກິດຈະການ ໃນການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ພະແນກສາທາລະນະສຸກ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງບ້ານແສງ**

ຄະນະກຳມະການປົກຄອງບ້ານແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

3. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

4. ເຂົ້າຮ່ວມ ການເກັບກຳ ຂໍ້ມູນ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານປະເມີນຜົນ

ກະທົບຕໍ່ສຸຂະພາບ;

5. ແກ້ໄຂ ຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

6. ປະສານສົມທົບກັບບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ຕໍ່ຫ້ອງການສາທາລະນະສຸກ ຂັ້ນເມືອງ ແລະ ຄະນະກໍາມະການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 70 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການສາທາລະນະສຸກ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານປະເມີນຜົນກະທົບຕໍ່ສຸຂະພາບ.

**ມາດຕາ 71 ເນື້ອໃນການກວດກາ**

ການກວດກາວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ;
2. ການປະຕິບັດໜ້າທີ່ຂອງ ເຈົ້າໜ້າທີ່ສາທາລະນະສຸກ ແລະ ພະນັກງານ-ລັດຖະກອນ;
3. ການເຄື່ອນໄຫວວຽກງານ ແລະ ການດໍາເນີນທຸລະກິດປະເມີນຜົນກະທົບຕໍ່ສຸຂະພາບ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານປະເມີນຜົນກະທົບຕໍ່ສຸຂະພາບ.

**ມາດຕາ 72 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ເຊິ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ເຊິ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ເຊິ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການກວດກາວຽກງານປະເມີນຜົນກະທົບຕໍ່ສຸຂະພາບ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 13
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 73 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດດໍາລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການປະເມີນຜົນກະທົບຕໍ່ສຸຂະພາບ ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 74 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 14
## ບົດບັນຍັດສຸດທ້າຍ

**ມາດຕາ 75 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ເຈົ້າຂອງໂຄງການ ຫຼື ກິດຈະການ ແລະ ຜູ້ໄດ້ຮັບຜົນກະທົບ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 76 ກຳນົດເວລາໃນການແກ້ໄຂໂຄງການລົງທຶນ ຫຼື ກິດຈະການ ທີ່ບໍ່ມີໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ**

ກະຊວງສາທາລະນະສຸກ ປະສານສົມທົບກັບຂະແໜງການຮັບຜິດຊອບໂຄງການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກວດກາຄືນບັນດາໂຄງການລົງທຶນ ຫຼື ກິດຈະການ ທີ່ຈຳເປັນຕ້ອງດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ຊຶ່ງໄດ້ດຳເນີນກິດຈະການ ກ່ອນດຳລັດສະບັບນີ້ມີຜົນສັກສິດ ແຕ່ບໍ່ມີໃບຢັ້ງຢືນການປະເມີນຜົນກະທົບຕໍ່ສຸຂະພາບ ພ້ອມທັງແຈ້ງເປັນລາຍລັກອັກສອນ ໃຫ້ເຈົ້າຂອງໂຄງການ ແລະ ກິດຈະການ ດຳເນີນການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານສາທາລະນະສຸກ ໃຫ້ສຳເລັດພາຍໃນກຳນົດເວລາ ໜຶ່ງປີ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ.

**ມາດຕາ 77 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 15 ກຸມພາ 2026 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**